# ຂໍ້ຄວາມກ່ຽວກັບວິທີການກວດນໍ້າລາຍຢູ່ບ້ານ

[ຈັງຫວະເພັງ]

[ການເລົ່າເລື່ອງ] ວິທີກວດນໍ້າລາຍຢູ່ບ້ານເຮັດແນວໃດ

ລັດມິນິໂຊຕາ ແລະ ບໍລິການກວດສຸຂະພາບແບບກ້າວກະໂດດ (Vault Medical Services) ໄດ້ຮ່ວມກັນ ເພື່ອນຳສະເໜີວິທີການກວດນໍ້າລາຍຢູ່ບ້ານສຳລັບທຸກຄົນ, ໂດຍບໍ່ເສຍຄ່າໃຊ້ຈ່າຍສຳລັບທ່ານ.

ເມື່ອອຸປະກອນການກວດຂອງທ່ານໄດ້ສົ່ງໄປໃຫ້ທ່ານ, ທ່ານຈະໄດ້ຮັບອີເມວທີ່ບອກໃຫ້ຮູ້ວ່າ ອຸປະກອນການກວດຂອງທ່ານມາຮອດ ແລ້ວ ແລະ ບອກວິທີລົງເຂົ້າຫາເວັບໄຊຂອງ Vault. ເຂົ້າຮັບການກວດໂຄວິດ-19 ໄວເທົ່າທີ່ຈະເຮັດໄດ້. ຖ້າທ່ານມີໂຄວິດ-19, ທັນທີທີ່ທ່ານຮູ້, ທ່ານສາມາດປະຕິບັດຕາມຂັ້ນຕອນຕ່າງໆທັນທີ ເພື່ອບໍ່ໃຫ້ມັນແຜ່ລະບາດໄປໃສ່ຄົນອື່ນ.

ເພື່ອເຮັດການກວດນໍ້າລາຍຢູ່ບ້ານ, ທ່ານຈະຕ້ອງມີການເສື່ອມຕໍ່ທາງອິນເຕີເນັດທີ່ດີ ແລະ ໂທລະສັບສະມາດໂຟນ ຫຼື ຄອມພິວເຕີ ແບບພົກພາ ທີ່ມີກ້ອງຖ່າຍຮູບ.

ຫ້າມກິນ, ດື່ມ, ສູບຢາ ຫຼື ຫຍໍ້າອັນໃດ ເປັນເວລາ 30 ນາທີ ກ່ອນຈະໄດ້ຮັບການກວດ.

ເມື່ອທ່ານກຽມພ້ອມທີ່ຈະໄດ້ຮັບການກວດ, ເຂົ້າໄປໃນເວັບໄຊທ໌ຂອງ Vault ໃນຊົ່ວໂມງທົດລອງຂອງພວກເຂົາ (ວັນອາທິດ-ວັນພະຫັດ 7 ໂມງເຊົ້າ - 7 ໂມງແລງ, ວັນສຸກ-ວັນເສົາ 7 ໂມງເຊົ້າ - 5 ໂມງແລງ). ທ່ານບໍ່ຈຳເປັນຕ້ອງນັດໝາຍ.

ທ່ານຈະເຂົ້າໄປຫ້ອງລໍຖ້າອອນລາຍ໌. ຖ້າມີຫຼາຍຄົນທີ່ໄດ້ຮັບການທົດລອງຢູ່ບ້ານຂອງເຂົາໃນມື້ນັ້ນ, ທ່ານອາດຈະຕ້ອງໄດ້ລໍຖ້າ ເລັກນ້ອຍ. ຫ້າມເຮັດການກວດເທື່ອ.

ທ່ານຈະຖືກເຊື່ອມຕໍ່ໃສ່ວິດີໂອ ຫາຜູ້ໃຫ້ຄຳແນະນຳໃນການທົດລອງຂອງ Vault ຊຶ່ງເປັນຜູ້ທີ່ຈະນຳພາທ່ານຜ່ານຂັ້ນຕອນຂອງການ ທົດລອງ. ທ່ານຈະຕ້ອງຖົ່ມນໍ້າລາຍໃສ່ໃນຈອຍທີ່ຕິດກັບທໍ່. ການທີ່ຈະໃຫ້ໄດ້ປະລິມານນໍ້າລາຍທີ່ຕ້ອງການ ປົກກະຕິແມ່ນໃຊ້ເວລາ ປະມານ 10-12 ນາທີ.

ຜູ້ໃຫ້ຄຳແນະນຳໃນການທົດລອງຈະບອກທ່ານວິທີຫໍ່ຜົນການທົດລອງ ເພື່ອສົ່ງກັບໄປໃຫ້ຫ້ອງທົດລອງ.

ເມື່ອຜົນກວດຂອງທ່ານສຳເລັດສົມບູນ ແລະ ຕິດຢ່າງດີແລ້ວ, ໃຫ້ສົ່ງຫໍ່ UPS ທີ່ກຽມໄວ້ນີ້ໂດຍດ່ວນໄປທີ່ UPS ດຣັອບ ບ໋ອກສ໌ ຫຼື ຮ້ານ UPS ເພື່ອສົ່ງຕົວຢ່າງຂອງທ່ານໄປຫ້ອງທົດລອງ. ມີເຄື່ອງມືຊອກສະຖານທີ່ ຢູ່ເວັບໄຊທ໌ຂອງ UPS ຊຶ່ງທ່ານສາມາດໃຊ້ໃນ ການຊອກສະຖານທີ່ຂອງ UPS ດຣັອບ ບ໋ອກສ໌ ຫຼື ຮ້ານ ທີ່ຢູ່ໃກ້ທ່ານ.

ທ່ານຄວນຈະໄດ້ຮັບຜົນກວດຂອງທ່ານທາງອີເມວ໌ ພາຍໃນ 24 ຫາ 48 ຊົ່ວໂມງ ຫຼັງຈາກຫ້ອງທົດລອງໄດ້ຮັບຕົວຢ່າງຂອງທ່ານ.

ຖ້າທ່ານມີຄຳຖາມ, ຕ້ອງການນາຍແປພາສາ ຫຼື ຕ້ອງການສິ່ງອຳນວຍຄວາມສະດວກ, ຈົ່ງໂທຫາ 800-800-5698 ຫຼື ອີເມວ accessibility@vaulthealth.com ດ້ວຍພາສາທີ່ທ່ານຕ້ອງການ ຫຼື ຂໍຄວາມຊ່ວຍເຫຼືອ. ຂໍຂອບໃຈ, ສຳລັບການກວດ ແລະ ການຊ່ວຍໃຫ້ຊຸມຊົນຂອງພວກເຮົາມີຄວາມປອດໄພ.

ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບໂຄວິດ-19, ເຂົ້າເບິ່ງ: mn.gov/covid19

[ຈັງຫວະເພັງ]

Minnesota Department of Health
Communications Office
PO Box 64975
St. Paul, MN 55164-0975
651-201-4989
health.communications@state.mn.us
www.health.state.mn.us

2/2/21 (Lao)

*ຕ້ອງການໄດ້ຮັບຂໍ້ມູນນີ້ເປັນຮູບແບບອື່ນ, ໂທຫາ: 651-201-4989*